**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 01 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 27/01/2021

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ວັນທີ 27/01/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 1 ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 16:00 ໂມງ ວັນທີ 27/01/2021 ທີ່ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ ຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສຳຄັນ ດັ່ງນີ້:**

1. ພິຈາລະນາ ແລະ ໃຫ້ທິດຊີ້ນຳ ກ່ຽວກັບ ການຊົດເຊີຍມູນຄ່າທີ່ດິນຂອງ ທຄຕລ ທີ່ຖືກຜົນກະທົບຈາກໂຄງການທາງດ່ວນໝາຍເລກ 1;
2. ພິຈາລະນາ ແລະ ຕົກລົງ ກ່ຽວກັບ ການສະເໜີກູ້ຢືມເງິນຂອງລູກຄ້າລາຍໃຫຍ່ຈຳນວນ 4 ລາຍການ;
3. ຮັບຮອງແຜນການປະຈຳປີ 2021 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
4. ຮັບຮອງການປັບປຸງກົດລະບຽບ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
5. ຮັບຮອງສັດສ່ວນການແບ່ງປັນກຳໄລຫຼັງອາກອນປະຈຳປີ 2020 ສຳລັບຈ່າຍເງິນປັນຜົນ ແລະ ເຂົ້າຄັງຕ່າງໆ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
6. ຮັບຮອງແຜນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ດັ່ງນີ້:
   - ມື້ປິດປຶ້ມເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ: 01 ເມສາ 2021;
   - ມື້ຈັດກອງປະຊຸມຜູ້ຖືຮຸ້ນ: 30 ເມສາ 2021.

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ